# ເວດສັນດອນ ກັບ ຊີວິດຄົນລາວ 8

## ບຸນເຕີມ ສີບຸນເຮືອງ

### ຄວາມສຳຄັນ

ວັນນະກຳເລື່ອງເວດສັນດອນ ແມ່ນຄັງສົມບັດອັນລ້ຳຄ່າ ບັນຈຸເນື້ອໃນ ຂໍ້ມູນ ແລະ ຮົດຂອງວັນນະຄະດີທັງ 9 ຮົດ ຢ່າງຄົບຖ້ວນ

ວັນນະກຳເລື່ອງເວດສັນດອນ ເປັນຕົ້ນເຫດໃຫ້ເກີດປາງບຸນປະຈຳປີ ທີ່ນິຍົມປະຕິບັດກັນມາແຕ່ຄັ້ງບູຮານ ຈົນເຖິງປັດຈຸບັນ

ນັກປາດອາຈານຜູ້ແຕ່ງ ເປັນພຣະສົງລາວ ມີຄວາມຮູ້ສະຫລຽວສະຫລາດຫລາຍ ວັນນະກຳເລື່ອງນີ້ສ່ອງແສງໃຫ້ເຫັນທັງທາງຄະດີໂລກ ແລະ ຄະດີທັມ, ອຸດົມສົມບູນດ້ວຍສັບສຳນວນ ແລະ ຂໍ້ມູນອື່ນໆ ແຕ່ເນື້ອໃນໃຈຄວາມແມ່ນການໃຫ້ທານ ທັງທາງດ້ານວັດຖຸ ແລະ ຈິດໃຈໄປພ້ອມກັນ.

ຄຳວ່າເວດສັນດອນ ເປັນຊື່ຕົວລະຄອນເອກໃນເລື່ອງ ເປັນພາສາປາລີວ່າ ເວສສັນຕຣະ ແປວ່າ ຢູ່ໃນລະຫວ່າງທາງພໍ່ຄ້າ, ມີຄວາມໝາຍວ່າ ນາງຜຸດສະດີ ທົງຄັບ (ມີລູກ) ສະເດັດລຽບລ່ຳພຣະນະຄອນ ພໍເຖິງລະຫວ່າງທາງພໍ່ຄ້າ ກໍເຈັບທ້ອງປະສູດລູກ ໃນທີ່ນັ້ນ, ດັ່ງນັ້ນ ຈຶ່ງໃຫ້ພຣະນາມວ່າ ພຣະເຫວດ. ການເອີ້ນຊື່ໜັງສືພຣະເຫວດ ມີຫລາຍຊື່ແຕກຕ່າງກັນ ເຊັ່ນ: ລຳພຣະເຫວດ, ລຳມະຫາຊາດ ຫລື ເວດສັນຕຣະຊາດົກ.

ຄຳວ່າເວດສັນຕຣະຊາດົກ ຫລືເວດສັນຕຣະຊາຕະກະ ເປັນຊື່ຊາດົກໃນສິບຊາດ ເວດສັນດອນ ເປັນເລື່ອງສຸດທ້າຍໃນການເປັນໂພທິສັດ.

### ຄຳວ່າ ມະຫາຊາດ ໝາຍເຖິງຊາດໃຫຍ່, ສິບຊາດ ມີດັ່ງນີ້ :

1. ພຣະເຕມ
2. ພຣະຊະນົກ
3. ພຣະສຸວັນນະສາມ
4. ພຣະເນມີຣາດ

5. ພຣະມະໂຫສົດ
6. ພຣະພູຣິທັດ
7. ພຣະຈັນທະກຸມມານ
8. ພຣະນາຣັດທະພົມ
9. ພຣະວິທູນບັນດິດ
10. ພຣະເວດສັນດອນ

*ເອີ້ນຊື່ຫຍໍ້ວ່າ : ເຕ, ຊະ, ສຸ, ເນ, ມະ, ພູ, ຈະ, ນາ, ວິ, ເວ*

ປະການສຳຄັນ ນັກປາດຜູ້ຂຽນເລື່ອງເວດສັນດອນ ໄດ້ພັນລະນາສອດແຊກຄວາມເປັນຈິງ ທຳມະຊາດ ແລະ ສັງຄົມໃນປະເທດຕົນ ແລະ ຕ່າງປະເທດ, ສ້າງຄ່ານິຍົມສູງ ກາຍເປັນປາງບຸນປະຈຳຊາດ.

## ວັນນະກຳເລື່ອງເວດສັນດອນ ກັບ ຊີວິດຄົນລາວ

1. ການເຮັດບຸນພຣະເຫວດ ຖືວ່າເປັນປາງບຸນທີ່ສຳຄັນຫລາຍ ນອນຢູ່ໃນຮີດສິບສອງ ບຸນພະເຫວດເຮັດໃນເດືອນສີ່ ຍ້ອນວ່າການເຮັດບຸນພຣະເຫວດ ມີການກະກຽມຢ່າງໃຫຍ່ຫລວງ ມັນຈຶ່ງເປັນບໍ່ເກີດຂອງຄວາມສາມັກຄີຂອງທຸກຊັ້ນຄົນ, ຊົນຊັ້ນ ແລະ ເພດໄວ ທັງສາສະໜາ ແລະ ບ້ານເມືອງມີການພົວພັນ ແລະປະສານງານກັນຢ່າງກົມກຽວໜຽວແໜ້ນ ເພາະວ່າ ການເຮັດບຸນພຣະເຫວດກໍ່ໃຫ້ເກີດຫລາຍກິດຈະກຳທີ່ສຳຄັນທັງທາງສາສະໜາ ຮີດຄອງປະເພນີ ແລະ ກິດຈະກຳອື່ນໆ ທີ່ມີການຈັດຕັ້ງແນ່ນອນ.

2. ວັນນະກຳ ເລື່ອງເວດສັນດອນ ບໍ່ພຽງແຕ່ຈັດພິທີເພື່ອຮັບຟັງໃຫ້ແລ້ວຮີດແລ້ວຄອງ ແຕ່ຍັງເປັນແນວທາງການປະຕິບັດຂອງຄົນໃນສັງຄົມ ນັບແຕ່ປະຊາຊົນຮອດຂັ້ນປົກຄອງ.

   ເພາະສະຖາບັນສາສນາ ເປັນບ່ອນສຳຄັນໃນການສັ່ງສອນວິຊາຄວາມຮູ້ຕ່າງໆ ອັນເປັນຈຸດໃຈກາງຂອງວຽກງານວັດທະນະທຳ ທຸກຊຸມຊົນໝູ່ບ້ານ ເປັນບ່ອນສ້າງຄົນໃຫ້ກາຍເປັນນັກປາດ ບັນດິດ ນາຍຊ່າງ ແລະ ອື່ນໆ

3. ການເຮັດບຸນພຣະເຫວດ ບໍ່ແມ່ນໜ້າທີ່ຂອງໃຜ ຜູ້ໃດ ຜູ້ນຶ່ງ ແຕ່ເປັນໜ້າທີ່ຂອງໝົດທຸກຄົນ ນັບແຕ່ຂັ້ນ ປົກຄອງ ລົງຮອດປະຊາຊົນທຸກຊັ້ນຄົນ, ຊົນຊັ້ນ ເພດໄວ ທີ່ມີການຈັດຕັ້ງຢ່າງແນ່ນອນ ເຮົາຈະ ສັງເກດເຫັນ ໃນບົດຮາດທະນາພຣະເວດ ມີບາງຕອນກ່າວວ່າ "ພາຍນອກມີພະຍາຈັນທະບູລີ ... ພ້ອມດ້ວຍພັນລະຍາເມຽມິ່ງ ລູກແກ້ວກິ່ງຊາຍາ ທັງເສນາອາມາດ

ທັງນັກປາດ ແລະ ປຸໂລຫິດ, ພາຍໃນມີພຣະຄູ ... ເປັນເຄົ້າ ຂໍນິມົນພຣະຜູ້ເປັນເຈົ້າສະແດງເທດ ສະໜາທັມ ... ໆລໆ"

ດ້ວຍເຫດນີ້ ຈຶ່ງເຮັດໃຫ້ການເຮັດບຸນພຣະເຫວດຊົງໄວ້ຊຶ່ງຄຸນຄ່າບວກ ລະຫວ່າງຄວາມສຳຄັນ ແລະ ການເຊື່ອຖືທາງສາສນາ ຈຶ່ງຍືນຍົງມາເຖິງປັດຈຸບັນນີ້

ອີກປະການສຳຄັນ ຫລັງຈາກທີ່ນັກປາດອາຈານ ໄດ້ແຕ່ງວັນນະກຳ ເລື່ອງເວດສັນດອນ ທີ່ບັນຈຸຣົດທັງ 9 ຣົດ ໃນວັນນະຄະດີ ເພິ່ນຍັງໄດ້ສ້າງນັກເທດ ແລະ ໝໍລຳ ທີ່ມີທຸ້ມສຽງດີ ຝຶກເທດ ແລະ ສັບສຳນວນຈັງຫວະທຳນອງຕ່າງໆ ເຊັ່ນ: ກາເຕັ້ນກ້ອນ, ຊ້າງທຽມແມ່, ລົມພັດໄຜ່, ນ້ຳຕ້ອງໃຕ້, ແຫລວລອດຟ້າ, ມ້າລຽບຄ້າຍ ແລະ ອື່ນໆ. ຈາກນັ້ນ ຍັງມີທຳນອງເທດແຫລ່ ເຮັດໃຫ້ຜູ້ຟັງເກີດມີມະໂນພາບ, ມີອາຣົມຈິດຄ້ອຍໃຈໄປຕາມເລື່ອງທີ່ສະແດງອອກໃນ 9 ຣົດ, 9 ຣົດນັ້ນມີດັ່ງນີ້ :

1. ຣົດແຫ່ງ ຄວາມຮັກ
2. ຣົດແຫ່ງ ຄວາມມ່ວນຊື່ນ
3. ຣົດແຫ່ງ ຄວາມກະຣຸນາ
4. ຣົດແຫ່ງ ຄວາມຄຽດ
5. ຣົດແຫ່ງ ຄວາມພຽນ
6. ຣົດແຫ່ງ ຄວາມຢ້ານ ຫລືທຸກ
7. ຣົດແຫ່ງ ຄວາມຊັງ - ໜ່າຍ
8. ຣົດແຫ່ງ ຄວາມປະຫລາດໃຈ
9. ຣົດແຫ່ງ ຄວາມສະຫງົບ

## ການຈັດຕັ້ງເຜີຍແຜ່ວັນນະກຳ ເລື່ອງເວດສັນດອນ ໃນສະໄໝບູຮານ

ການຈັດຕັ້ງເຜີຍແຜ່ໃນສະໄໝບູຮານ ຖືວ່າເປັນວຽກງານທີ່ສຳຄັນຫລາຍ ກາຍເປັນປະເພນີປະຈຳປີ ຂອງປະຊາຊົນ. ນອກຈາກໄດ້ຈັດຕັ້ງຝຶກແອບ ອ່ານ, ເທດ ແລະ ຂັບລຳແລ້ວ ຍັງໄດ້ຈັດປາງບຸນໃຫຍ່ ດັ່ງທີ່ກ່າວມາແລ້ວ. ແຕ່ວ່າຮູບການເຜີຍແຜ່ໃນເວລານັ້ນ ມີແຕ່ການຈັດງານບຸນ ວິທີເຜີຍແຜ່ ມີແຕ່ອ່ານ, ເທດ ຫລືລຳດ້ວຍປາກ ແລະ ແຕ້ມພາບປະກອບ ຊຶ່ງເພິ່ນເອີ້ນວ່າ ແພພຣະເຫວດ ຫລື ຜ້າພະບັງ.

ນອກຈາກພຣະສົງໄດ້ຈັດຕັ້ງຝຶກແອບ ອ່ານ ແລະ ເທດແລ້ວ ທາງບ້ານເມືອງຍັງໄດ້ຝຶກແອບຂັບລຳປະເພດຕ່າງໆ ເຊັ່ນ: ລຳຢືນ, ລຳຄູ່, ລຳກອນໂຈດຖາມ, ລຳເລື່ອງ ແລະ ຂັບລຳປະເພດຕ່າງໆ, ວິທີການເຜີຍແຜ່ແບບບູຮານ ກໍຍັງຄົງສືບຕໍ່ມາເຖິງປັດຈຸບັນນີ້.

## ເນື້ອໃນບາງຕອນ

ວັນນະກຳເລື່ອງອື່ນໆ ເພິ່ນຈະແບ່ງຕອນຂອງເລື່ອງວ່າ ເປັນບັ້ນ ເຊັ່ນ: ໜັງສືສິນໄຊ ວ່າ ຍຸດທະກຳບັ້ນ, ປະຕິສົນທິບັ້ນ ແລະອື່ນໆ ແຕ່ໃນວັນນະກຳພຣະເຫວດ ເພິ່ນແບ່ງໜັງສືວ່າເປັນກັນ ທັງນີ້ອາດຊິກ່ຽວພັນກັບສາສນາ

ວັນນະກຳເລື່ອງເວດສັນດອນ ແປເປັນຄຳຮ້ອຍແກ້ວໃນສະໄໝ ພຣະຍາຫລ້າແສນໄຕພູວະນາດ (ພ.ສ. 2025) ໂດຍ ພຣະມະຫາເທບຫລວງ ມີ 13 ກັນ ຄື:

1. ທັດສະພອນ ມີ 19 ພຣະຄາຖາ ກ່າວເຖິງນາງຜຸດສະດີຂໍພອນທິບ ສິບປະການ ຈາກພຣະອິນ ສ່ອງແສງເຖິງຄວາມປາຖະໜາອັນຍິ່ງໃຫຍ່ຂອງແມ່ຍິງ, ພອນສິບປະການນັ້ນຄື :

    (1) ຂໍໃຫ້ຜູ້ຂ້າເກີດໃນຜາສາດອັນສັກສິດ
    (2) ຂໍໃຫ້ດວງຕາທັງສອງຂອງຜູ້ຂ້າດຳຄືຕາລູກເນື້ອ
    (3) ຂໍໃຫ້ຄີ້ວຜູ້ຂ້າກົ່ງຄືຄັນທະນູ (ຄັນສອນ)
    (4) ຂໍໃຫ້ນາມມະກອນ (ຊື່) ຜູ້ຂ້າວ່າຜຸດສະດີ
    (5) ຂໍໃຫ້ຜູ້ຂ້າມີລູກຜູ້ປະເສີດ
    (6) ເມື່ອຜູ້ຂ້າທົງຄັບ (ມີລູກ) ຢ່າໃຫ້ທ້ອງຜູ້ຂ້າໃຫຍ່ ໃຫ້ເປັນດັ່ງຄັນທະນູ
    (7) ຢ່າໃຫ້ນົມຜູ້ຂ້າຍານ ໃຫ້ຕຶ່ງເຕັມດັ່ງດອກບົວຈູມ
    (8) ຂໍໃຫ້ຜົມຜູ້ຂ້າເໝືອນປີກແມງຄັບ
    (9) ຂໍໃຫ້ຜິວຜູ້ຂ້ານວນ ຢ່າໃຫ້ຫ່ຽວຍານ
    (10) ຄົນຕ້ອງໂທດເຖິງປະຫານ ຂໍໃຫ້ເປື້ອງປ່ອຍດ້ວຍຍົດປະຣິຍາຍ ປັນຍາຍານ

2. ຫິມະພານ ມີ 104 ພຣະຄາຖາ ກ່າວເຖິງປ່າທີ່ຊຸ່ມຊື່ນໄປດ້ວຍນ້ຳໜອກ
3. ທານະກັນ ມີ 209 ພຣະຄາຖາ ກ່າວເຖິງການບໍລິຈາກທານຂອງພຣະເຫວດ ໂດຍສະເພາະ ຊ້າງປັດໄຈຍະນາເຄນ ແກ່ຊາວເມືອງກະລິງຄະລັດ

4. ວະນະປະເວດ ມີ 57 ພຣະຄາຖາ ກ່າວເຖິງພຣະເວດຖືກຂັບໄລ່ຈາກເມືອງ ໄປຢູ່ປ່າເຂົາຄີລີວົງກົດ
5. ຊຸຍຊະກະ (ຊຸຍຊົກ) ມີ 79 ພຣະຄາຖາ ກ່າວເຖິງພາມຊຸຍຊະກະ ແລະນາງອະມິຕະຕາ
6. ຈຸລະພົນ ມີ 35 ພຣະຄາຖາ ກ່າວເຖິງປ່ານ້ອຍ
7. ມະຫາພົນ ມີ 80 ພຣະຄາຖາ ກ່າວເຖິງປ່າໃຫຍ່ ປ່າເລິກດົງໜາ ແລະ ນົກຊະນິດຕ່າງໆ
8. ກຸມານ ມີ 101 ພຣະຄາຖາ ກ່າວເຖິງທ້າວຊາລີ ນາງກັນຫາ ຕອນພາມມາຂໍນຳພຣະເວດສັນດອນ
9. ມັດທີ ມີ 90 ພຣະຄາຖາ ກ່າວເຖິງ ນາງມັດທີເຂົ້າປ່າຫາໝາກໄມ້ ກັບມາບໍ່ເຫັນລູກແລ້ວຮ້ອງໄຫ້ຮ່ຳໄຮ.
10. ສັກກະບັນ ມີ 43 ພຣະຄາຖາ ກ່າວເຖິງພຣະອິນແປງກາຍເປັນພາມ ມາຂໍນາງມັດທີ ເພື່ອລອງໃຈພຣະເຫວດ ແລະ ພຣະເຫວດກໍຂໍພອນຈາກພຣະອິນ 8 ຂໍ້ ຄື:

    (1) ຂໍໃຫ້ພຣະບິດາຫາຍໂກດຮ້າຍ ມີເມດຕາ ສະເດັດມາຮັບ ກັບໄປຄອງຣາຊສົມບັດ ໃນສີນະຄອນສີພີ
    (2) ຂໍໃຫ້ປ່ອຍນັກໂທດໃນຄຸກທັງໝົດ
    (3) ຂໍໃຫ້ທານແກ່ຄົນທຸກຍາກ ໃນທົ່ວແວ້ນແຄວ້ນ
    (4) ຂໍໃຫ້ລຸອຳນາດສະຕີ ລ່ວງພະຣິຍາທ່ານ ຂໍໃຫ້ພໍໃຈແຕ່ສະເພາະ ຊາຍາຂອງພຣະອົງເທົ່ານັ້ນ
    (5) ຂໍໃຫ້ເຫັນພຣະໂອຣົດທັງສອງ ຄືທ້າວຊາລີ ແລະ ນາງກັນຫາ
    (6) ຂໍໃຫ້ຝົນແກ້ວ 7 ປະການ ຕົກລົງໃນເມືອງສີພີ ຂະນະທີ່ພຣະອົງໄປເຖິງພຣະນະຄອນ
    (7) ຂໍໃຫ້ສົມບັດໃນຫ້ອງພຣະຄັງ ຢ່າໝົດ ເວລາບໍຣິຈາກແກ່ຍາຈົກທົ່ວເມືອງ ດ້ວຍນ້ຳພຣະໄທ
    (8) ເມື່ອສະຫວັນນະຄົດ (ຕາຍ) ຂໍໃຫ້ໄປເກີດໃນສະຫວັນຊັ້ນດຸສິດ, ເມື່ອຈຸຕິລົງມາເປັນມະນຸດ ໃຫ້ໄດ້ບັນລຸໂພທິຍານ

11. ມະຫາຣາດ ມີ 69 ພຣະຄາຖາ ກ່າວເຖິງພຣະບູຣົມມະສີສົນໄຊ ໄຖ່ເອົາຫລານ ແລະ ພາມກິນຫລາຍທ້ອງແຕກ
12. ສັກຂັດຕິ ມີ 16 ພຣະຄາຖາ ກ່າວເຖິງບັ້ນເຊີນຫົກກະສັດພົບກັນ
13. ນະຄອນ ມີ 48 ພຣະຄາຖາ ກ່າວເຖິງແຫ່ພຣະເຫວດເຂົ້າເມືອງ

## ວິຈານບາງຕອນ

ໃນວັນນະກຳເລື່ອງເວດສັນດອນ 13 ກັນ ລ້ວນແຕ່ມີຄວາມສຳຄັນທັງໝົດ ແຕ່ໃນທີ່ນີ້ ຂ້າພະເຈົ້າ ຂໍວິຈານບາງຕອນສຳຄັນ ດັ່ງນີ້ :

ກ). ເລື່ອງນາງມັດທີ ໄດ້ໃຫ້ຄະຕິແກ່ກຸລະສະຕຣີ ສະແດງເຖິງຄວາມຮັກອະມະຕະ ທີ່ມີຕໍ່ພຣະສວາມີ (ຜົວ) ເຖິງຄາວທຸກກໍທຸກນຳກັນ ເຖິງຄາວສຸກກໍສຸກນຳກັນ ດັ່ງຄຳເວົ້າວ່າ : "ມີທຸກຮ່ວມຕ້ານ ມີສຸກຮ່ວມເສບ"

ຂ). ໃນກັນທັດສະພອນ ສະແດງເຖິງຄວາມປາດຖະໜາຂອງສະຕຣີ ຄື: ຄວາມງາມ, ຄວາມມີອຳນາດເປັນໃຫຍ່ໃນຄອບຄົວ, ຄວາມມີຊື່ສຽງ ກຽດຕິຍົດ ແລະ ມີລູກທີ່ດີ.

ຄ). ໃນທາງເສດຖະກິດ ແລະ ສັງຄົມ ໄດ້ໃຫ້ຄະຕິຈາກກັບຊຸຍຊົກ ຂໍທານແລ້ວຮູ້ທ້ອນໂຮມ ແຕ່ກໍເຫັນວ່າ ການຢູ່ຮ່ວມກັນຂອງພາມ ກັບນາງອະມິຕະຕາ ບໍ່ມີສຸກ ຍ້ອນເຫດຜົນດັ່ງນີ້ :

1. ທັງສອງຕ່າງໄວເກີນຂອບເຂດ ຄື: ພາມຊຸຍຊົກ 60 ປີ ນາງອະມິຕະຕາ 16 ປີ
2. ພາມຊຸຍຊົກ ບໍ່ມີອາຊີບເປັນຫລັກຖານ
3. ເອົາໃຈເມຍເກີນໄປ ເພາະຕົນເອງບົກຜ່ອງ ຄື: ເຖົ້າຫລາຍ
4. ການຍັດງອນຂອງນາງອະມິຕະຕາ ເປັນຈິດຕະວິທະຍາຂອງຜູ້ຍິງ ສະແດງໃຫ້ເຫັນວ່າ ຜູ້ຊາຍຮັກຜູ້ຍິງເກີນໄປ (ຮັກຂ້າງດຽວ)

ງ). ທາງການເມືອງ, ການປົກຄອງ

ພຣະເຫວດ ເປັນນັກກິລາການເມືອງສະໄໝບູຮານ ຮູ້ຈັກກາລະໂອກາດ ເຄົາລົບສິດປະຊາທິປະໄຕ ພະຍາຍາມສ້າງສັນຕິພາບໃຫ້ເກີດຂຶ້ນ ຫລີກເວັ້ນການໃຊ້ຄວາມຮຸນແຮງ

ນອກຈາກນີ້ ຍັງເຫັນວ່າ ວັນນະກຳເລື່ອງເວດສັນດອນ ໄດ້ໃຫ້ຄະຕິທັມ ຈະຣິຍະທັມ ປຣັຊຍາ ການປົກຄອງ ເສດຖະກິດ ແລະ ສັງຄົມ ຄື:

### 1. ດ້ານຄະຕິທັມ ແລະ ຈະຣິຍະທັມ

ສອນໃຫ້ຄົນຮູ້ປະກອບຄວາມດີ ເອີ້ນວ່າກຸສົນທັມ ຈຶ່ງສາມາດນຳຄົນໃຫ້ມີຄວາມສະຫງົບສຸກໄດ້, ພຣະເຫວດ ປະກອບດ້ວຍຄຸນທັມ 3 ປະການ ຄື:

- ບໍ່ໂລບ
- ບໍ່ຮ້າຍ
- ບໍ່ຫລົງ

*ເອີ້ນວ່າຮາກເຫງົ້າຂອງຄວາມດີ*

**2. ສ່ວນຕາພານຊຸຍຊີກ ເປັນຄົນເຊິ່ງມີບຸກຄະລິກລັກສະນະດັ່ງນີ້ :**

- ເປັນຄົນມີແຕ່ຄວາມໂລບ
- ເປັນຄົນໂກດແຄ້ນ ໃຈຮ້າຍ
- ເປັນຄົນມີຄວາມຫລົງໃນການຕັນຫາ

ສາມປະການນີ້ ແມ່ນຮາກເຫງົ້າຂອງຄວາມຊົ່ວ

**3. ດ້ານເສດຖະກິດ - ສັງຄົມ**

ເມື່ອສຶກສາໃນກັບຊຸຍຊີກ, ຈຸນລະພົນ, ມະຫາພົນ ຈະເຫັນວ່າກ່ຽວຂ້ອງກັບຊີວິດສັງຄົມ ຄື: ການຮູ້ຈັກປະຢັດມັດທະຍັດ, ການຮູ້ຈັກຮັກສາຊັບພະຍາກອນທຳມະຊາດ ການຮັກສາສະພາບແວດລ້ອມ ຄວາມສວຍງາມຂອງພູຜາປ່າໄມ້ ແລະ ສັດນາໆຊະນິດ

ຈາກເນື້ອໃນດັ່ງກ່າວ ວັນນະກຳເລື່ອງເວດສັນດອນ ຍັງໄດ້ໃຫ້ຂໍ້ມູນດ້ານຮີດຄອງປະເພນີຫລາຍຢ່າງເຊັ່ນ :

3.1. ປະເພນີສູ່ຂວັນ

3.2. ປະເພນີເລືອກຊ້າງ - ມ້າ

3.3. ຄວາມຮູ້ກ່ຽວກັບຜ້າ

3.4. ຄວາມຮູ້ກ່ຽວກັບໄມ້ ແລະ ສັດສາວາສິ່ງ

3.5. ຄວາມຮູ້ກ່ຽວກັບອາຫານ, ເຂົ້າຕົ້ມ, ເຂົ້າໜົມ ແລະ ອື່ນໆ

## ຄວນອະນຸລັກຮັກສາ ແລະ ເຜີຍແຜ່ວັນນະກຳເລື່ອງນີ້ແນວໃດ ?

ເປັນທີ່ຮູ້ກັນແລ້ວວ່າ ວັນນະກຳບູຮານ ເລື່ອງເວດສັນດອນ ເປັນສົມບັດ ແລະ ມໍລະດົກອັນລ້ຳຄ່າຂອງຊາດ ນັບວ່າເປັນສິ່ງເອກອ້າງຂອງຄົນລາວ ເໝືອນດັ່ງເຮົາມີມູນມັງ ຖ້າບໍ່ຮູ້ເອົາອອກມາໃຊ້ໃຫ້ເປັນປະໂຫຍດ ມັນກໍໝົດຄ່າລາຄາໄປຕາມການເວລາ. ສະນັ້ນ ເພື່ອບໍ່ໃຫ້ເສື່ອມສູນ ການເຜີຍແຜ່ຍັງຖືວ່າເປັນບັນຫາສຳຄັນ.

**ວິທີການ**

1. ບັນຈຸເຂົ້າໃນຫລັກສູດການຮຽນ - ສອນ ຊັ້ນຕ່າງໆ
2. ຈັດພິມປື້ມບາງຕອນ ສຳລັບອ່ານທົ່ວໄປ
3. ປະດິດແຕ່ງບົດຂັບ - ລຳ
4. ຈິນຕະນາການພາບພຣະເວດ ແລະ ຕົວລະຄອນອື່ນໆ
5. ສະແດງລະຄອນ, ລຳເລື່ອງ, ກາຕູນ ແລະ ອື່ນໆ

## ມົນສະເໜເລື່ອງ ເວດສັນດອນ ສະເໜີບາງຕອນ ເພື່ອສາທິດ

**ມົນສະເໜ**

ເລື່ອງເວດສັນດອນ ເປັນມົນສະເໜມີຄ່ານິຍົມສູງໃນສັງຄົມລາວ ການເຮັດບຸນພຣະເຫວດ ແມ່ນຊີວິດຈິດໃຈຂອງຄົນລາວ ຍ້ອນວ່າວັນນະກຳເລື່ອງເວດສັນດອນ ໄດ້ໃຫ້ຄວາມສາມັກຄີ ໃຫ້ອາຣົມຈິດ ໃຫ້ຄວາມຮູ້ປຣັຊຍາ ແລະ ອື່ນໆ.

**ສະເໜີບາງຕອນ ເພື່ອສາທິດ**
**ກອນລຳກ່ຽວກັບ ພຣະເວດສັນດອນ**
**ກອນລຳເຍີ້ນ ກ້ຽວສາວ**

| | |
|---|---|
| - ເປີ່ນເວີ່ນເອີຍແກ້ມເຈົ້າເປີ່ນເວີ່ນ | ຄັນຫາກແມ່ນຊູ້ເພິ່ນ |
| ໃຫ້ເວີ່ນໜີໄກໆ | ຄັນບໍ່ແມ່ນຊູ້ໃຜ |
| ໃຫ້ເຈົ້າໄຫລເວີນໆ | ມາທາງພີ້ ... |
| ໂອລະນໍ ... | ນວນເອີຍ ! |

| | |
|---|---|
| - ມາເຫັນນ້ອງ | ອິນຕອງແຕ້ມແຕ່ງ |
| ແຕ່ພີ່ແຍງຢາກເວົ້າ | ນຳເຈົ້າແຕ່ດົນ |
| ແຕ່ພີ່ຊຸບຄວ່າຄົ້ນ | ໝົ້ນເລົ່າກໍເລົາ |
| ແຕ່ພີ່ປອງນຳເອົາ | ໄດ້ສີ່ປີປາຍເຂົ້າ |
| ຈຶ່ງໄດ້ມາເຫັນເຈົ້າ | ແພກະເຈົາປີ້ງບ່ຽງ |
| ມາພົບສີກໍ່າກ້ຽງ | ຢາກຂໍເວົ້າບ່ອນຈິງ |
| ຄັນບໍ່ໄດ້ກ່ອມກິ້ງ | ອ້າຍຂໍຝາກແຕ່ຄວາມຮັກ |
| ຄັນບໍ່ຈິງໃຈຮັກ | ມັກກັບພັບກ້ຽວ |
| ອ້າຍຂໍຫຽວທາງດ້ວຍ | ດອມນາງພໍຫາຍໂສກ |
| ຄັນແມ່ນໂຊກບໍ່ໃຫ້ | ຂໍໄດ້ແຕ່ເຫັນ |
| ຊາດນີ້ເວັ້ນ | ຊາດໃໝ່ຊິນຳປອງ |
| ຄັນນາງຕາຍເປັນຄອງ | ຊິຄ່ອຍໄຫລເປັນນ້ຳ |
| ເອົາປານພາມມະໂນເຖົ້າ | ນຳຫາອົງພຣະເຫວດ |
| ໜີໄປຊົງເພດສ້າງ | ສິນຊ້ອຍຢູ່ດອຍ |
| ຍັງນຳຂໍລູກນ້ອຍ | ສອງອ່ອນກັບຫາ |
| ນາງມັດທີບໍ່ທັນມາ | ພຣະເຫວດທານສອງນ້ອຍ |
| ຈົນວ່ານາງສີສ້ອຍ | ສະຫງົບລົມລົ້ມທ່າວ |
| ພຣະເຫວດບໍ່ອ່າວເອື້ອ | ລະດີນ້າວກ່າວສານ |

*ສິນາບວບແຄນຊ້ວນທາງລ່ອງ ທໍ່ນີ້ແລ້ວ*

## ກອນແຫລ່ເຊີນພຣະເວດ

**ຕອນທີ 1**

| | |
|---|---|
| ບັດນີ້ ພໍ່ນອບນີ້ວ | ນຳແທ່ນທູນຖວາຍ |
| ສອງບຸດຕາ | ຢູ່ດົງດອນໄມ້ |
| ອາຫານໄດ້ | ທາງໃດບໍລິໂພກ |

ກັບທັງໂຣກພະຍາດຮ້າຍ ຕົນເຈົ້າກໍບໍ່ມີ ພໍ່ລື
ທຸກຄ່ຳເຊົ້າ ພຣະພໍ່ພຣຸນສົມ
ຈຶ່ງໄດ້ນຳເສນາ ໃຜ່ເມືອງມານ້ອມ
ຂໍເຊີນເຈົ້າ ສີໄມລູກພໍ່
ຫວັງຈັກເຊີນໜໍ່ເນື້ອ ພຣະອົງເຈົ້າຄູ່ຊູ່ຄົນ ນີ້ແລ້ວ

**ຕອນເວົ້າ**

ລູກພໍ່ເອີຍ ! ພໍ່ນີ້ຂໍເຊີນເຈົ້າ ຄືນເມືອຕຸ້ມໄພ່
ຢ່າໄດ້ມາຢູ່ຄ້າງ ດົງກວ້າງດັ່ງລີງ
ຢ່າມານອນໃນຖ້ຳ ເດືອນດຳຟ້າມືດກ່ຳ
ຈົ່ງຄືນເມືອຢູ່ກ້ຳ ນະຄອນກວ້າງແຫ່ງເຮົາ ລູກພໍ່ເອີຍ !

**ບາງຕອນ ທານະອັນ (ບັ້ນພຣະບູຣົມຫ້າມລູກໃພ້)**
**ສຳນວນທຳສະໝຸດວຽງຈັນ**

ມະທີ ດູລາມະທີ ຜູ່ທະລົງສົມສີສຸດຍິ່ງ ອີງຄະ ດັ່ງເຮົາພໍ່ ຈັກເຕືອນເຈົ້ານີ້ເນີ ຕະວັງ ອັນວ່ານາງມະທີ ສີສະນິດ ນິດສາເມທີ ເຈົ້າຈົ່ງຫລີງດູແວນ ຖຸບັດເຍ ສັດຕາ ສັດທັງຫລາຍຝູງໃດ ອັນມີໃນປ່າ ກິຕາ ຈະຄືວ່າກໍ່ການ ທ່ານວ່າຮ້າຍ ແຕນເຫລືອງ ໃສມຽງໆ ນັ້ນວ່າ ທາກ ຕົວຮ້າຍທາກເພິ່ງກົວ ຫົວຫລອງນັ້ນແມ່ນບົ້ງ ຍ່ອມເປັນ ຜົ້ງທັບກາງ ກໍດີ ມະນັກຂິກາ ຈະຄືວ່າຍູງຍອງຂອງປ່າ ແມງເຜີ້ງຄວ່າບິນໄປ ທີ່ງໄສ ຍຸງ ກໍເພີງວ່າ ຈັກບຽດ ບຽນພຽນຂົບຕອດ ເຈົ້າຍອດແກ້ວນາງກະສັດ ເປັນທຸກຍິ່ງຖຸບັດ ຕັດຖຸະອະເນໃນທີ່ນັ້ນ ໆລໆ ...

## ຕອນນາງມະທີຕອບປູ່

ສາ ມະທີ ເມື່ອນັ້ນ ບັ້ນຣາຊມະທີ ສີວໍຣະກັນຍາ ອາຫະ ກ່າວວ່າ ເທວະອ້າໄຫວ້ມະຫາຣາຊ ປິຕຣັງ ອັນວ່າ ມະຫາຣາຊເຈົ້າຊາດເຫງົ້າຈອມກະສັດ ອັກຂາສີ ເຈົ້າກໍບອກຍັງສະພາວະ ອັນເປັນທຸກຍາກລຳບາກຍິ່ງ ໜັກໜາ ໃນອະຣັນຍາປ່າກວ້າງ ໃຫ້ຜາກົດແກ່ຜູ້ອ້າ ດັ່ງນັ້ນ ອະທັງ ສ່ວນດັ່ງອ້ານ້ອຍບາດມະທີ ສີວໍຣະສົມຣົດ ກໍຈັກອົດຍັງທຸກທັງຫລາຍຝູງນັ້ນຍິ່ງໆນັກ ຄັດສັນຕິເຍ ກໍຈັກໄປກັບບາດລູກມະຫາຣາດແທ້ດີຫລື ປະການນຶ່ງ ອ້າໄຫວ້ພຣະພູມີທິຣາດ ອະທັງ ອັນວ່າອ້ານ້ອຍບາດມັດທີ ສີວໍຣະກັນລະເຍດ ປະນຸທະເທສສາມີ ກໍຈັກເລີກ

ເຜິກເສຍ ກາຍັງຍັງຫຍ້າແຂມ ກຸສັງ ປາຍແຫລມນັ້ນຫຍ້າຄາ ໂປຕະລິກາ ໃບມັນຊານັ້ນ ຫຍ້າຄົມປາວ ອຸສີຣັງກ້ານຍາວນັ້ນຫຍ້າແຝກ ມຸນຈະປັບພະຊັງ ຍັງຫຍ້າມຸ້ງກະຕ່າຍ ປູໄປງ່າຍນັ້ນຫຍ້າປ້ອງ ດ້ວຍຫ້ອງແຫ່ງຫົວອົກ ບໍ່ໃຫ້ຍົກໄປເປັນອັນຍາກ ແກ່ເຈົ້າຟາກຟ້າເວດສັນດອນ ຂ້າຈັກໂຄຈອນໄປກາງປ່າ ຜູ່ຂ້າຜ່າບຸໄປໃນພົງຫິມະເວດ ດອມເຈົ້າຈອມເຫດຜົວຂວັນ ໆລໆ.

## ບາງຕອນ ຊຸຍຊົກ ຕອນໝາໄລ່ກັດພາມ

ສຸພັກຂາ ອັນວ່າໝາທັງຫລາຍ ເຈືອກັນມາແວດລ້ອມເຫົ່າຍັງພາມ ຕົວນຶ່ງຊື່ວ່າ ອ້າຍຕາບຕ້ວງ ມັນກໍອຶດອາຫານບໍ່ໄດ້ກິນກວງຟານ ແລະ ໝີເໝັ້ນ ຄະໂຍ່ງເຕັ້ນຄາບຖືງພາມຂາດ ເຂົ້າຢາດເຣ່ຍຣວາຍ ຕົວນຶ່ງຊື່ວ່າສາຍທະນູພາມຂາດ ເກີດແຕ່ທໍາມະຊາດໝາດີ ມັນເຕັ້ນຂົບວິພາມຂາດ ເປັນປ່ອງ ຕົວນຶ່ງຊື່ວ່າ ປີນຣາມຮ່ອງມັນຢ່ອງແຢ່ງຂົບຂະນ່ອງພາມຈ່ອງໄວ້ ຕົວນຶ່ງຊື່ວ່າປີນຣາມແຫລັງ ຫານແມ່ນແມ້ງມະໂນພານ ເຂົ້າປ່າຫານສຸດທະຍິ່ງ ຂົບທຸກສິ່ງບໍ່ມີຄາ ເຫັນພາມມາຄືຄຸບຄືຄາບ ຄະໂຍງເຕັ້ນຂົບກຸບພາມຂາດ ຕົວນຶ່ງ ຊື່ວ່າບັກແຜ້ວແລ່ນສອດແສ້ວສະແຫວງຫາຫຸກເຄົ້າໄມ້ ໝາຄາບໄດ້ໄມ້ເທົ້າພາມ ຕົວນຶ່ງຊື່ວ່າ ອ້າຍຫຸຍຫາຍ ກິນຊີ້ນໝົດສາມຫາບ ຖ້າມັນໄດ້ຄາບມັນກໍບໍ່ມີວາງ ພ້າໄງ້ຄາງຫງາຍໄວ້ ກໍຈິ່ງເອົາອອກໄດ້ທັນມັນ ຕົວນຶ່ງຊື່ວ່າ ອ້າຍຕາທອກຫູແດງ ມັນກໍສະແຫວງຫາຫຸກເຄົ້າໄມ້ ແມ່ນວ່າຕີນມັນຢຽບຫົວເຕົ່າ ບໍ່ເຫົ່າຈັກຄວາມ ຄັນມັນເຫັນພາມມາ ມັນກໍຈິ່ງເຫົ່າ ຕົວນຶ່ງຊື່ວ່າອ້າຍຫາງງໍຫາງງອດ ນາຍພານຈອບຈັບໃສ່ກົງເຫລັກ ມັນກໍເຮັດວັງໆຫຍິ້ງແຂ້ວ ຕົວນຶ່ງຊື່ວ່າບັກຊາງ ຫາງມັນດໍາໂຈກໂພກໆ ຄະໂຍງເຕັ້ນຂົບພ້າພາມ ໃຫ້ບ່ານຄຸງສັນ ຕົວນຶ່ງຊື່ວ່າບັກເຄົ້າເມົ້າ ໄດ້ເກົ້າສອກ ມັນບໍ່ມືນຕາ ຫົວມັນຢູ່ເຕົາຣາງ ຫາງມັນຢູ່ນອກບ້ານ ໝາທັງຫລາຍຝູງນີ້ມີຄຸນສາມປະການ ເຕັ້ນປານຟານ ຫານປານເສືອອອກເລົ່າ ຕີນມັນຢຽບຫົວເຕົ່າ ປາກມັນເຫົ່າຫາແລນ ຕາມັນແຫງນຫາເຜິ້ງ ຫາຕໍ່ ຫາງມັນແຍ່ຮູປູ ຫູມັນຟັງເຈົ້າຂອງມັນຮຽກ ກົ້ນມັນຈຽກເອົາກວາງເອົາຟານ ເຫັນພາມມາມັນຈິ່ງເຫົ່າ ອະຣຸກາງ ຕົວນຶ່ງຂົບຄະນ່ອງກໍ້າຊ້າຍ ຕົວນຶ່ງຮ້າຍຈິກຖືງພາມ, ພາມເຖົ້າກໍແລ່ນຂຶ້ນຕົ້ນໄມ້ທ່ຽວພະລັນ ສອງສາມຄາວກໍບໍ່ຮອດງ່າໄມ້ ກໍຈິ່ງເອົາໄມ້ເທົ້າແຫວ່ງກວັກກົວໆ ວ່າພາໂລແທ້ນໍໝາຂີ້ຮ້າຍມາໄລ່ຂົບກູແທ້ນໍ ດູພໍດີພາມເຖົ້າປີບປ່ວງ ເຂົ້າໄປໃນດົງ ພາຍຖືງຂຶ້ນຕົ້ນໄມ້ໆກໍຫັກ ແລ່ນຂຶ້ນຫລັກໆກໍໂຄ່ນ ແລ່ນຂຶ້ນກໍບົງໆກໍຫ້ານ ຂຶ້ນຕົ້ນສ້ານໆກໍເພ ເຕເຊໆ ຂຶ້ນຕົ້ນໝີ່ ກົ້ນຂີ້ຕີ່ພານລານ ເຕເຊໆຂຶ້ນຕົ້ນກອກ ຄ້ອນເທົ້າຕອກຫົວໝາເງັກ ຮ້ອງວ່າເສັ້ນາໆ ໝາຂີ້ຮ້າຍມາໄລ່ຍາດຂົບກູ.

## ບາງຕອນ ມັດທີ

ວິຈາຣັນຕີ ເຈົ້າມັດທີ ສີສະແຍ້ມ ສອງຝ່າຍແກ້ມແປກຜິວຄຳ ສອງຕາດຳດີດູປອດ ແຂນສອກສ້ວຍອົກໄຂ ພື້ນມືໃສຊະຊ່ອນເນື້ອ ກ້ຽງອ່ອນຜິວສົນວນໆ ລັກຂະນະດີຄວນຄາດ ເປັນລູກທ້າວມັດທະລາດຣາຊາ ນາງກໍ ຕະເດີນຫາສອງສີໄວກໍບໍ່ໄດ້ ເລີຍຮ້ອງໄຫ້ຢູ່ວິວອນວ່າ ບຸບພິດຕະຍາເວດສັນດອນເຮີຍ ເຈົ້າຂ້ອຍຂ້ານ້ອຍຫາກ ຕົວດຽວ ອົບຂວາຍຂຽວປ່າໄມ້ ຮ້ອງໄຫ້ຈົ່ມເຣຫາ ສອງໂສພາພະແມ່ ວ່າຣຸກຂາມຸເລ ທຸກແງ່ເງື້ອມເຄືອໜາມ ທຸກອາຣາມ ແລະ ຣົ່ມໄມ້ ທຸກແຫລ່ງໄຫລ່ຫົນໃດເດ ແປວປາກຖ້ຳ ຢຽວວ່າ ແກ້ວບຸດຕາແມ່ນີ້ໄປຕົກລົງນ້ຳ ແມ່ກໍຄອຍລົງງົມ ຢຽວວ່າ ແກ້ວບຸດຕາແມ່ນີ້ໄປຕົກຕົມ ແມ່ກໍຄ່ອຍລົງງົມ ແລະ ຢ່ຳຄັ້ນ ຫລອນວ່າໄດ້ຢ່ຳແກ້ວ ແມ່ກໍຄອຍຄຳໄປຄຳມາ ກໍບໍ່ພົບສອງໂສພາຈັກແຫ່ງ ທະຣົງລັກຂະນາຮ້າຍພົບແພ່ງພໍຕາ ແກ້ວບັບພາເຮີຍ ... ຈອມຣາດທ່ຽງວ່າຈັກຊິມານໍຣະບາດເນື້ອ ວັນນີ້ບໍ່ສົງໄສ ... ພຣະຂຸນໄທເຮີຍ ... ເຈົ້າຂ້ອຍກູນາ ເມັຍກ່ຳພ້າ ເມື່ອເປັນທຸກດອມກັນແດ່ກໍຂ້າເທີ້ນ ... ໆລໆ

## ບາງຕອນ ນະຄອນ ກັນສຸດທ້າຍ

ທ້າວທິຣາດມາເມືອງ ຈຳເຣີນເຮືອງເລີດແລ້ວ ນອນແທ່ນແກ້ວສະວັດດີ ໃນຣາຕີຈັກໃກ້ຮຸ່ງ ໃຫ້ທ້າວມຸ່ງພິຈາ ຣະນາ ເຈົ້າຈິ່ງຈິນດາເຖິງຖືກວ່າ ວັນລຸນຮຸ່ງເຊົ້າພໍງາຍ ຄົນທັງຫລາຍຝູງຂະໜອດ ທອດໄຮ້ກັບທັງພາມ ຝູງຄົນຣາມເດັກຖ່າວ ເຂົາຮູ້ຂ່າວວ່າກູມາ ເປັນພຣະຍາສະເວີຍຣາດດັ່ງເກົ່າ ເຂົາຈັກແບມືເປົ່າເຂົ້າມາຂໍ ຍັງວໍຣະຣາຊທານ ທຸກປະການນ້ອຍໃຫຍ່ ກູຈຶ່ງໄດ້ມາເປັນ ພຣະຍາໃໝ່ຄືນດຽວ ຝູງນາຍເຫລັ້ມສາງເຂົາກໍບໍ່ ທັນເວນວາງສັກສິ່ງ ກູຈັກໄດ້ອັນໃດມາທັນໃຈໂດຍດ່ວນ ມາເປັນສ່ວນສິນທານ ພໍປະມານອີ່ມອົກ ແກ່ຍາຈົກ ຄົນຂໍທັງຫລາຍນີ້ຈາ ເຈົ້າມີພຣະຣາຊຈິນດາ ດັ່ງນັ້ນ ບັ້ນອິນທາຕົນວິເສດ ຕັດຮູ້ເຫດບໍ່ມີນານ ອັນໄດ້ໃຫ້ພອນ ປາງກ່ອນ ບໍ່ຢຸດຢ່ອນໃຈຕິດ ກໍນິຣະມິດຮູ້ຮອດ ອິນທ້າວທອດລົງພະລັນ ຍັງທ່າຝົນສະຫວັນວາງວິ່ງແກ້ວ ເຈັດສິ່ງເນື່ອງນອງ ເງິນຄຳກອງມູນມາກ ແກ້ວຟ້າຢາດລົງມາ ຄືວ່າແກ້ວບັບພາເຮືອງຮຸ່ງ ແກ້ວມະນີພຸ່ງ ຮັດສະໝີ ແກ້ວພິທູນດີພາຍເຜີດ ແກ້ວປະເສີດນາໆ ໄຫລລົງມາບໍ່ຂາດ ເດັຍຣະດາດທົ່ວທັງເມືອງ ດູຮຸ່ງ ເຮືອງຊູ່ດ້າວ ຍູທ່າງທ້າວແຕ່ງໂອຍທານ ແຖມສົມພານບໍ່ໜ້ອຍ ເຈົ້າຟ້າຊ່ວຍຊູບຸນ ທັງມູນເມືອງເຫລືອແຫລ່ ໄດ້ແກ້ວເມືອງສະຫວັນ ຕົກທັນໃຈທຸກແຫ່ງ ຍູທ່າງທ້າວໄທ້ແຕ່ງໂອຍທານ ປາງເມື່ອພຣະພູບານສະເຫວີຍຣາດ ແກ້ວຟ້າຢາດຕາງຝົນກໍມີແລ ໆລໆ

## ປະເພນີສູ່ຂວັນໃນພຣະເຫວດ

ພາຍຫລັງສົ່ງສະການພາມແລ້ວ ກໍທຳພິທີສູ່ຂວັນໃຫ້ຊາວເມືອງ ເພື່ອເປັນສີລິມຸງຄຸນ ມີອາຈານຜູ້ສະຫລາດມານັ່ງອາດຄູນຂວັນ ວ່າ: ສີສີມື້ນີ້ແມ່ນມື້ສັນ ວັນນີ້ແມ່ນວັນດີ ວັນດີຖືອະມຸດຕະໂຊກ ສິດທິໂຍກພ້ອມລັກຂະນາ ຂ້ອຍຜູ້ຕາຈິ່ງໄດ້ມາສູ່ ຂ້ອຍຜູ້ປູ່ຈິ່ງໄດ້ມາຫາ ຕາມພາສາຂ້ອຍຜູ້ເຖົ້າຮູ້ ຊ່າງເວົ້າເອີ້ນເອົາຂວັນ ມາພະລັນບໍ່ຊ້າ ເອີ້ນອ່ອນຫລ້າຂວັນຫລານ ວ່າມາເຢີຂວັນເອີ້ຍ! ຂວັນເຈົ້າໄປຕົກນ້ຳ ກໍໃຫ້ພາກັນອອກ ຂວັນເຈົ້າໄປຕົກພອກ ກໍໃຫ້ພາກັນຟູ ຂວັນເຈົ້າໄປຕົກຮູກໍໃຫ້ພາກັນພົ້ນ ຍາໄດ້ໄປຢູ່ຊຸ້ນໃນຮ່ອງຫ້ວຍແກມປູ ຢ່າໄດ້ໄປຢູ່ຮູແກມກົບ ແກມຂຽດ ຢ່າໄດ້ຄຽດແກ່ເຜດຜີພານ ຢ່າໄດ້ຂາມແກ່ຜີເປົ້າ ຫາມພາມເຖົ້າເຂົ້າກອງໄຟ ເດີນທາງໄກລຳບາກ ໄປສົ່ງຊາກຜີພານ ຄານຫາມຫັກຄາບ່າ ລົ້ມຄຸບຄວ່າກາງຄ່ອຍອິດໄປ ເມືອໜ້າເຖິງປ່າຊ້າຜີພານ ກາງໄພ ຂວາງຫິມະເວດ ກາຍດ້າວເຂດແດນຄົນ ໃນດົງດອນຄັບຄັ່ງ ຂ້າມຝັ່ງນ້ຳພຽງພໍ ຍໍໂລງໄກວຂຶ້ນຝັ່ງ ກົນຂີ້ທັ່ງ ເຊຊວນ ກໍໃຫ້ມາໃນມື້ນີ້ວັນນີ້ ມາເຢີຂວັນເອີຍ! ມານຳທາງເສັ້ນກວ້າງ ຢ່າໄດ້ໄປຢູ່ລ້າງກາງໄພ ຢ່າໄດ້ໄປນຳຜີ ຢ່າໄດ້ໜີນຳເພື່ອນ ກິນເຂົ້າຜີໃຫ້ເຈົ້າຮາກ ຄ້ຽວໝາກຜີໃຫ້ເຈົ້າຄາຍ ໃຫ້ເຈົ້າຄືນມາດາຍທ້ອງເປົ່າ ໃຫ້ຄືນມາກິນເຂົ້າດອມຕາ ໃຫ້ຄືນມາກິນປາດອມປູ່ ມາຖ້ອນໝູ່ສູ່ຄົນ ມານຳປ່ອງເພີ່ນຖາງ ມານຳທາງເສັ້ນກວ້າງ ມາເຖິງຮ້ານເຮືອນຕົນ ມາທຸກຄົນຢ່າຢູ່ ມາໃຫ້ຄູ່ທັງມວນ ຊວນກັນມານີເນຽ ນີໜ່ຳ ມາພ້ອມພ່ຳພຽງກັນ ນ້ຳພຽງເອີກໃຫ້ເຈົ້າຄ່ອຍຢັ່ງ ນ້ຳພຽງຝັ່ງໃຫ້ເຈົ້າຄ່ອຍລອຍ ມາຮອດແຄມຫ້ວຍໃຫ້ເຈົ້າຄ່ອຍເຢາະຄ່ອຍຢ່ອງ ເຖິງທີ່ຮ່ອງໃຫ້ເຈົ້າເອົາໄມ້ກ່າຍຂົວຂ້າມມາ ຮອດກາງໄຮ່ຢ່າໄດ້ຊຸ້ນປ່າຫຍ້າຄາ ຮອດກາງນາຢ່າໄດ້ຊຸ້ນປ່າເຂົ້າ ຮອດເຄົ້າໄມ້ຢ່າໄດ້ທອດຫົວນອນ ມາຄອນໆຢ່າໄດ້ສະທ້ານ ຢ່າໄດ້ຢ້ານແກ່ເຜດຜີພານ ທີ່ຈະຕາມທາງໄລ່ ຫລອກ ມານຳຢອກຂວັນຄົນ ... ໆລໆ

*ເອກະສານອ້າງອີງ :* 1. ວັນນະຄະດີສານ ທ່ານ ອາຈານມະຫາສີລາ ວີຣະວົງສ໌
2. ປຶ້ມເທດພຣະເວດ
3. ວັນນະກຳ ເລື່ອງເວດສັນດອນ ໃຫ້ຫຍັງແດ່ແກ່ພຸດທະສາສະນິກກະຊົນລາວ ທ່ານ ອາຈານ ກິແດງ ພອນກະເສີມສຸກ